**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ສະຖາບັນພັດທະນາສີມືແຮງງານ

ເລກທີ: 1264 / ສພງ

ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ

ວັນທີ: 18 ສິງຫາ 2025

ສັນຍາເລກທີ : RFQ C2.2-G-9

# ຫນັງສືເຊີນ ເຂົ້າຮ່ວມການປະມູນສົມທຽບລາຄາ

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນພັດທະນາສີມືແຮງງານ, (ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ) ໄດ້ຮັບອະນຸມັດງົບປະມານປະຈໍາສົກປີ 2023 ເພື່ອດໍາເນີນການ **ປະມູນຈັດຊື້ ລົດຝຶກເຄື່ອນທີ່ ປະເພດລົດບັນທຸກ 6 ລໍ້ (Truck for SDI Mobile Training)** ສໍາລັບສະຖາບັນພັດທະນາສີມືແຮງງານ ດ້ວຍການປະມູນແບບສົມທຽບລາຄາ.
2. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນພັດທະນາສີມືແຮງງານ (ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ) ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ **ລົດຝຶກເຄື່ອນທີ່ ປະເພດລົດບັນທຸກ 6 ລໍ້** ສໍາລັບສະຖາບັນພັດທະນາສີມືແຮງງານ ໄລຍະເວລາໃນການສົ່ງມອບ ຫລື ການບໍລິການແມ່ນ **[06 ເດືອນ]**.
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **9:00 ໂມງເຊົ້າ ວັນທີ 02 ກັນຍາ 2025, ທີ່ ຫ້ອງປະຊຸມ ຊັ້ນ 2 ຕຶກໄອທີ, ບ້ານຄໍາຮຸ່ງ, ເມືອງໄຊທານີ, ນະຄອນຫລວງວຽງຈັນ, ເບີໂທ: 94479799** Email: psgproject.proc@gmail.com, cc: xanaphaypx@gmail.com; ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ **9:10 ໂມງເຊົ້າ ວັນທີ 02 ກັນຍາ 2025** ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ຫົວໜ້າສະຖາບັນ**

ປອ ບຸນມາ ສິດທິໄສມ